# ພົບຮັກຄັ້ງແຣກທີ່ງານສັງສັນ

ໂດຍ: ບ່າວຫູກັກເຈັດ

| | |
|---|---|
| ຍົນຍານບິນຜ່ານຜ້າຍ | ກາຍເມກເວີ່ນລົງມາ |
| ແອັຕແລັນຕາ ຈໍຣ໌ເຈັຽ | ອ່ອນລະເຣັຽຫົວໃຈອ້າຍ |
| ຈຸດຫມາຍຄືເມືອງນີ້ | ມັນເຕັມທີຍິນຕ້ອງປ່ຽນ |
| ນັ່ງລຽນກັນເພື່ອຖ້າ | ເວລາຈໍ້ຊິປ່ຽນຍົນ |

| | |
|---|---|
| ສາຍຕາມອງບໍ່ອາດພົ້ນ | ເຫັນຄົນນັ່ງເປັນຖັນແຖວ |
| ແລ້ວເຫັນຄືຍິງລາວ | ເປີ່ນເວີ່ນຂາວຜິວນ້ອງ |
| ຄືດັ່ງມີມົນຕ້ອງ | ສນອງໃຈໃຫ້ຄິດຮ່ຳ |
| ຜິວພ່ອງພັນຈົບງາມ | ຫນ້ຳຊ່າງຄືຍອດຊູ້ ແຟນອ້າຍຜູ່ເກົ່າຫຼັງ |

| | |
|---|---|
| ລັກຢືນແຍງຈົນຕາຄ້າງ | ຄຶດວ່າແມ່ນແຟນຕົນ |
| ນັ່ງຖ້າຍົນຢູ່ຄົນດຽວ | ຊ່າງປ່ຽວໃຈແທ້ນໍນ້ອງ |
| ຢາກລອງໄປຈາຕ້ານ | ສຽງຫວານໄດ້ຍິນຕໍ່ |
| ຫຼືແມ່ນເຂົາແທ້ບໍ | ເຂົາມານີ້ໄດ້ຈັ່ງໃດ? |

| | |
|---|---|
| ໃຈຫນຶ່ງ ອ້າຍຢາກຫຽັບເຂົ້າໃກ້ | ທັກທາຍເບິ່ງຄວາມສຸຂທຸກ |
| ແຕ່ກໍກັງວົນອຸກ | ຢູ່ຂ້າງມີເມັຽແກ້ວ |
| ແນວວ່າມີໃຈຕັ້ງ | ຄືຄວາມຫວັງຊິພໍ້ຫມູ່ |
| ບຸນເຮົາມາ ພລາເຮົາກໍຊຸກຍູ້ | ຊູເຮົາໃຫ້ໄດ້ພົບກັນ |

| | |
|---|---|
| ຄິດເຖິງຄາວກ່ອນນັ້ນ | ເຄີຍຮັກຮ່ວມຮຽນສຶກສາ |
| ຮັກກັນມາຕັ້ງຫຼາຍປີ | ກ່ອນຈະຫນີໄກບ້ານ |
| ຄວາມສັມພັນເຮົາຝັງແຫນ້ນ | ເປັນແຟນກັນຄົນຮູ້ທົ່ວ |

ພົວພັນກັນຄົນຮັບຮູ້ ພຽງເປັນຊູ້ຄູ່ໃຈ

ບຸນຜລາຮ່ວມສ້າງໄວ້ ຟ້າແກ້ງກັ່ນລິຂິດ
ເຂົ້າໃຈຜິດວ່າສຽງນາງ ຕໍ່ຊັ້ນກາງຈຶ່ງຫມາຍຊ້ອນ
ສຸດສະອອນໃຈເສົ້າ ເຈົ້າເປັນຫງັ່ງຄືຝັນໃຫຍ່
ແຕ່ຂັ້ນເທິງເພິ່ນສັ່ງໄວ້ ໃຫ້ສັບຊ້ອນວຽກງານ

ແນວເສກສັນເອງບໍ່ໄດ້ ຈຶ່ງພາດທ່າການສຶກສາ
ບຸນຜລາບໍ່ມີພໍ ຢາກຕໍ່ກາງດັ່ງນາງເວົ້າ
ເຮົາພັດມີແຮງນ້ອຍ ຄົນພອຍໆເສັ້ນບໍ່ໃຫຍ່
ຈຸດທີ່ນາງວາງຄາດໄວ້ ສະພານຕັ້ງໄຕ່ບໍ່ເຖິງ

ຄິດຄຳນຶງໃຈບໍ່ແລ້ວ ແນວວ່າຮັກບໍ່ສົມຫວັງ
ຫົນທາງເຮົາປິດຕັນ ເມກຫມອກຄວັນບໍ່ເຫັນແຈ້ງ
ຄຳແພງນາງຊ່າງຫມາຍມຸ້ງ ຝັນສູງໃຫ້ຈິດເຊື່ອມ ເດນໍ
ເອື້ອມບໍ່ເຖິງສຸດຢ່ອງຢື້ ມືຂອງອ້າຍເມື່ອຍແຕ່ທາວ

ສຸດຢາກສາວເຄືອກ້ຽວ ຫຽວທອດກອງກະຖິນ
ຍິນວ່ານາງວາງຄວາມຫວັງ ຕໍ່ຊັ້ນກາງຮັກລາງເສົ້າ
ເຮົາເປັນພໍພຽງໄດ້ ແຕ່ຄຣູສອນຊັ້ນຕ່ຳ
ນ້ອງພັດມົວຄິດນຳ ຊັ້ນກາງສູງສຽດຟ້າ ຜລາອ້າຍບໍ່ມີ

ດວງຊາຕາໄດ້ຂີດຊີ້ ຮູ້ຕົນຕ່ຳຈຶ່ງຜິດຫວັງ
ພາງນ້ຳຕາລົ່ນຕົກໃນ ຈຳຈາກໃກໄລບ້ານ
ສ່ວນວ່າຝັນຂອງນ້ອງ ເລີຍເປັນຈິງໄດ້ສ້າງກໍ່
ໄດ້ຮ່ວມຫໍເປັນຄູ່ຊ້ອນ ຫມຸນຫມອນນ້ອຍຮ່ວມເຂົາ

ຈຶ່ງດັ້ນຫນີຈາກບ້ານ          ບໍ່ໄດ້ສັ່ງນ້ອງພໍຄວາມ
ສຳຣວມຈິດຄືນຜິດຫວັງ          ເວດທະນັງຫວັງຕາຍຫນ້າ
ລາຈາກສອງເຊືອໄທ້          ພາຍນ້ຳຕາລາພໍ່ແມ່
ໃຈຄະນຶງຫ່ງງແທ້          ນຳແຟນອ້າຍຜູ້ໄຝ່ສູງ

ຂໍໃຫ້ສົມມາດມຸ້ງ          ອ້າຍເອີ້ນສັ່ງໄປຕາມລົມ
ສຸດຂື່ນຂົມຣະທົມຈິດ          ຊີວິດເຮົາຊ່າງເວີນວ້າງ
ຄືກັບເຮືອຄາຄ້າງ          ກາງວັງນ້ຳວຸ້ນທົ່ງ
ເປັນຫ່ວງຫຼັງເປັນຫ່ວງຫນ້າ          ບັນຫາກຸ້ມບໍ່ແກ້ໄຂ

ສາມຊົ່ວໂມງນັບໄດ້          ຍົນວົນເວີ່ນເຫີນລົງ
ກົງກັບເວລາຫມາຍ          ຈອດຮອດປາຍທາງແລ້ວ
ຍ່າງເປັນແຖວເດີນຕາມປ້າຍ          ເພື່ອນຳໄປເອົາຫີບເຄື່ອງ
ຮອດເມືອງຫມາຍນັດໄວ້          ອ້າຍຫວັງພໍ້ພົບເຫັນ    ຈິງແລ້ວ

ໃຈເກືອບຢຸດບິບເຕັ້ນ          ເຫັນຊູ້ເກົ່າເຄີຍຝັນຫາ
ຈົນຜວາລືມໄປ          ອ້າຍດີໃຈຢາກໂຊມອູ້ມ
ຈັບກຸມມືຖືແຫນ້ນ          ເມື່ອເຫັນແຟນຊູ້ເກົ່າ
ຄວາມໃນທີ່ຢາກເວົ້າ          ມັນຄາຄ້າງຢູ່ຫວ່າງຄໍ

ບຸນເຮົາຫຼາຍຈຶ່ງໄດ້ພໍ້          ນ້ຳຕາມໍ່ລົ່ນຕົກໃນ
ລູກຜູ້ຊາຍຕ້ອງທົນກືນ          ກັ້ນນ້ຳຕາເອົາໄວ້
ຊາດີໃຈຢາກໄປອູ້ມ          ຊຸມແຊວທັງກອດແກວ່ງ
ຢາກຢືນແຍງກະພ່ອງນັ້ນ          ໃຫ້ມັນກຸ້ມຄ່າຄິດຫາ

ສາມສິບຈຶ່ງພົບຫນ້າ ເຫມືອນດັ່ງວ່າຕອນນອນຝັນ
ຢາກອຸທານຄວາມໃນໃຈ ບອກໃຫ້ຟັງຈົນຫມົດສ້ຽງ
ພຽງແຕ່ມີແນວນ້າວ ສາວໄຍໃຈໃຫ້ໄກວ່ເກັ່ຽ
ເມັຽຜູ້ຢືນຢູ່ຂ້າງຂ້າງ ຢ້ານນາງເຊື້ ເມີ່ງງ

ຈິນພະວົງໃຈສະທ້ານ ຢາກສານຕໍ່ຄຳຖາມ
ຄົນງາມຍັງຄວນຄິດ ຫ່ວງເຣື່ອງຫຼັງເຮົາບໍນ້ອງ
ຄາວເຮົາຄອງໃຈຫມັ້ນ ຄວາມສັມພັນຍັງຫມັ້ນແກ່ນ
ເຮົາເປັນແຟນຜູກຫມັ້ນ ພັນກ້ຽວນ້ອງຈື່ຈຳ ຢູ່ບໍ

ຢ່າວ່າອ້າຍຕອກຢ້ຳ ອ້າຍຍັງຮ່ຳຄະນຶງເຖິງ
ອ້າຍລຳເພິງຝັນຫາ ປາຖນາທຸກແລງເຊົ້າ
ແມ່ນເຮົາສວາຍໄປແລ້ວ ໃຫ້ຄົງຍັງຄຳເປັນເພື່ອນ ກັນເດີ
ຄວາມຊົງຈຳຢ່າຄາດເຄື້ອນ ອ້າຍມີເຈົ້າຕລອດກາລ

ຊາໃຈ ອ້າຍຢາກຈາກ່າວຕ້ານ ຢ້ານນ້ອງບໍ່ຫົວຊາ
ຫາກແມ່ນມີເວລາ ຢາກຮ່ວມພາຊຸມເຊົ້າ
ຄັນພໍມີ ຢາກຂໍເວົ້າ ພໍບັນເທົາໃຈຄຶດຮອດ
ຕລອດເວລາທີ່ຫ່າງນ້ອງ ຍັງຄາຂ້ອງຈື່ບໍ່ລືມ

ອ້າຍນີ້ສຸດປາບປື້ມ ທັງຊົມຊື່ນຍິນດີ
ເຫັນນ້ອງມີຄວາມສຸຂ ໄດ້ຄູ່ຄອງບໍ່ຫມອງເສົ້າ
ຂໍໃຫ້ເຮົາຄົງຫມັ້ນ ຄວາມສັມພັນຖານເພື່ອນ
ທັງປຶກສາແລະຕັກເຕືອນ ຍາມເຮົາມີເຫດຮ້ອນ ປັນຫາກຸ້ມໃຫ້ກ່າວເຖິງ.....